ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ກົດລະບຽບ
# ຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງຂອງກົດລະບຽບ**

ກົດລະບຽບສະບັບນີ້ ກໍານົດຫຼັກການພື້ນຖານກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ລະບອບແບບແຜນວິທີເຮັດວຽກຂອງສະມາຄົມ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ມີຄວາມໂປ່ງໃສ, ເປັນລະບົບ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງສະມາຄົມ, ສະມາຊິກສະມາຄົມ ແລະ ສັງຄົມ.

**ມາດຕາ 2 ຊື່ສະມາຄົມ**

- ຊື່ສະມາຄົມເປັນພາສາລາວ:**ສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ;**
- ຊື່ຫຍໍ້ສະມາຄົມເປັນພາສາລາວ: **ສຄສສລ;**
- ຊື່ສະມາຄົມເປັນພາສາອັງກິດ: Lao Occupational Safety Health and Environmental Association;
- ຊື່ຫຍໍ້ສະມາຄົມເປັນພາສາອັງກິດ: LOSHEA

**ມາດຕາ 3 ຕາປະທັບ ແລະ ສັນຍາລັກຂອງສະມາຄົມ**

3.1 **ຕາປະທັບ**

ສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ມີຕາປະທັບເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານໂດຍແມ່ນອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ເປັນຜູ້ອະນຸມັດຕາມຂະໜາດ ແລະ ຮູບແບບທີ່ກໍານົດໄວ້ໃນລະບຽບກົດໝາຍ.

3.2 **ສັນຍາລັກ**

ສະມາຄົມ ຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ມີສັນຍາລັກເປັນຂອງຕົນເອງ ຊຶ່ງໄດ້ຮັບການອະນຸມັດ ແລະ ຮັບຮອງຈາກອົງການຈັດຕັ້ງລັດທີ່ກ່ຽວຂ້ອງ.

ໂລໂກ້ຂອງ LOSHEA (Lao Occupational Safety, Health and Environmental Association) ຫຼື **ສະມາຄົມຄວາມປອດໄພ, ສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ** ມີການອອກແບບທີ່ເຕັມໄປດ້ວຍຄວາມໝາຍທີ່ເລິກເຊິ່ງ ໂດຍການນໍາໃຊ້ສັນຍະລັກ ແລະ ສີສັນຕ່າງໆ ເພື່ອສື່ເຖິງໜ້າທີ່ບົດບາດ ແລະ ຈຸດປະສົງຂອງສະມາຄົມຢ່າງຈະແຈ້ງ.

ຄວາມໝາຍໂດຍລະອຽດຂອງແຕ່ລະສ່ວນປະກອບມີດັ່ງນີ້:

- ຕົວໜັງສື ແລະ ຊື່ສະມາຄົມ

- **ດ້ານເທິງ (ພາສາລາວ):** "ສະມາຄົມຄວາມປອດໄພ ສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ" ເປັນການບົ່ງບອກຊື່ ແລະ ຂອບເຂດການເຮັດວຽກຂອງສະມາຄົມຢ່າງເປັນທາງການ.
- **ດ້ານລຸ່ມ (ພາສາອັງກິດ):** "LAO OCCUPATIONAL SAFETY, HEALTH AND ENVIRONMENTAL ASSOCIATION" ແລະ ຕົວຫຍໍ້ **"LOSHEA"** ຢູ່ເທິງແຖບໂບສີຂາວ ເພື່ອສ້າງຄວາມເປັນສາກົນ ແລະ ງ່າຍຕໍ່ການຈື່ຈໍາ.

- ສັນຍະລັກຫຼັກພາຍໃນວົງມົນ

- **ໝວກນິລະໄພສີເຫຼືອງ** : ເປັນສັນຍະລັກສາກົນຂອງ **ຄວາມປອດໄພໃນການເຮັດວຽກ** (Safety) ເພື່ອສື່ເຖິງການປົກປ້ອງ, ການປ້ອງກັນອຸບັດຕິເຫດ ແລະ ການດູແລສຸຂະພາບອະນາໄມຂອງຜູ້ອອກແຮງງານໃນທຸກໆພາກສ່ວນ.
- **ຟັນເຟືອງສີຟ້າ-ຂາວ** : ໝາຍເຖິງ ພາກອຸດສາຫະກໍາ, ການພັດທະນາ, ແລະ ການຂັບເຄື່ອນເສດຖະກິດ. ການທີ່ໝວກນິລະໄພຢູ່ຄູ່ກັບຟັນເຟືອງ ສະແດງເຖິງຄວາມປອດໄພທີ່ຕ້ອງມາກ່ອນ ແລະ ຄວບຄູ່ໄປກັບການພັດທະນາອຸດສາຫະກໍາສະເໝີ.
- **ແຜນທີ່ປະເທດລາວ (ສີຂາວ ຢູ່ພື້ນຫຼັງສີແດງ):** ບົ່ງບອກຢ່າງຊັດເຈນວ່າ ສະມາຄົມນີ້ເປັນອົງກອນຂອງ **ປະເທດລາວ** ແລະ ພ້ອມທີ່ຈະຮັບໃຊ້, ພັດທະນາມາດຕະຖານຄວາມປອດໄພໃຫ້ແກ່ທົ່ວທຸກພາກສ່ວນໃນຂອບເຂດທົ່ວປະເທດ.
- **ໃບໄມ້ສີຂຽວ, ສາຍນໍ້າ ແລະ ພູຜາ** : ເປັນຕົວແທນຂອງ **ສິ່ງແວດລ້ອມ** ສື່ເຖິງຄວາມອຸດົມສົມບູນຂອງທໍາມະຊາດໃນລາວ ແລະ ຄວາມມຸ່ງໝັ້ນຂອງສະມາຄົມທີ່ຈະປົກປັກຮັກສາສິ່ງແວດລ້ອມ, ສົ່ງເສີມການພັດທະນາທີ່ຍືນຍົງ

- ຄວາມໝາຍຂອງສີ .

- **ສີຂຽວ** : ເປັນສີຫຼັກຂອງຂອບວົງມົນ ແລະ ໃບໄມ້ ໝາຍເຖິງ ຄວາມປອດໄພ (Safety), ສິ່ງແວດລ້ອມ, ຄວາມອຸດົມສົມບູນ ແລະ ການມີສຸຂະພາບແຮງງານທີ່ດີ.
- **ສີເຫຼືອງ** : ໝາຍເຖິງ ຄວາມລະມັດລະວັງ, ຄວາມສະຫວ່າງໄສ ແລະ ການເຕືອນໃຫ້ມີສະຕິໃນການປ້ອງກັນໄພ.
- **ສີແດງ ແລະ ສີຂາວ** : ເປັນສີທີ່ໄດ້ຮັບແຮງບັນດານໃຈມາຈາກທຸງຊາດລາວ ສື່ເຖິງຄວາມຮັກຊາດ, ຄວາມສາມັກຄີ ແລະ ຄວາມເປັນເອກະລັກຂອງຊາດ.
- **ສີຟ້າ** : ໝາຍເຖິງ ຄວາມເປັນມືອາຊີບ, ຄວາມໝັ້ນຄົງ, ຄວາມສະອາດຂອງແຫຼ່ງນໍ້າ ແລະ ອາກາດ ທີ່ບໍລິສຸດ.

LAO OCCUPATIONAL SAFETY, HEALTH AND ENVIRONMENTAL ASSOCIATION
LOSHEA

ມາດຕາ 4 ຈຸດປະສົງການເຄື່ອນໄຫວຂອງສະມາຄົມ

1. ເພື່ອຈັດຕັ້ງ ແລະ ເຄື່ອນໄຫວໃຫ້ຖືກຕ້ອງຕາມກົດໝາຍ, ລະບຽບການ;

2. ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ ໂດຍສະເພາະວຽກງານສຶກສາທິການ ແລະ ກິລາ; ແຮງງານ ແລະ ສະຫວັດດີການສັງຄົມ, ກະສິກຳ ແລະ ສິ່ງແວດລ້ອມ;

3. ປະກອບສ່ວນເຂົ້າໃນການ ຊຸກຍູ້, ສົ່ງເສີມ, ສະໜັບສະໜູນໃນວຽກງານດ້ານປອດໄພການອອກແຮງງານ, ສຸຂະພາບຂອງຜູ້ອອກແຮງງານ ແລະ ການອະນຸລັກ, ນຳໃຊ້ ທີ່ເປັນມິດຕໍ່ສິ່ງແວດລ້ອມ;

4. ສ້າງ-ປັບປຸງຄູ່ມື ຫຼື ປຶ້ມກ່ຽວກັບດ້ານຄວາມປອດໄພ, ສຸຂະພາບແຮງງານ ແລະ ສິ່ງແວດລ້ອມ;

5. ປຸກຈິດສຳນຶກ, ຝຶກອົບຮົມ, ໂຄສະນາເຜີຍແຜ່, ສ້າງຄວາມເຂົ້າໃຈ ໃຫ້ແກ່ນັກຮຽນ, ນັກສຶກສາ, ສັງຄົມ, ປະຊາຊົນ, ຜູ້ອອກແຮງງານ, ຜູ້ໃຊ້ແຮງງານ ແລະ ພາກສ່ວນອື່ນໆ ກ່ຽວກັບດ້ານຄວາມປອດໄພ-ຄວາມສຳຄັນທາງດ້ານສຸຂະພາບຂອງແຮງງານ, ຄວາມປອດໄພ ແລະ ສະພາບແວດລ້ອມການອອກແຮງງານ; ວິທີປ້ອງກັນ-ປົກປ້ອງຊີວິດສຸຂະພາບຂອງຜູ້ອອກແຮງງານ, ຜົນກະທົບຈາກການຄວາມບໍ່ປອດໄພໃນການອອກແຮງງານ ແລະ ສິ່ງແວດລ້ອມ; ສ້າງ-ປັບປຸງສະພາບແວດລ້ອມການເຮັດວຽກຂອງຜູ້ອອກແຮງໃຫ້ ມີລັກສະນະປອດໄພ, ສຸຂະພາບດີ, ຫຼຸດຜ່ອນຄວາມສ່ຽງອຸປະຕິເຫດ; ວິທີການນຳໃຊ້ເຄື່ອງມື-ອຸປະກອນຕ່າງໆປ້ອງກັນຄວາມປອດໄພຕໍ່ສຸຂະພາບຜູ້ອອກແຮງງານ ແລະ ອື່ນ; ວິທີການແຍ່ງ, ເກັບ, ຮັກສາ ແລະ ຈຳກັດຂອງຂີ້ເຫຍື້ອ ໂດຍຜ່ານທາງຊ່ອງທາງຕ່າງໆເຊັ່ນ: ຜ່ານລະບົບສືບອອນລາຍ, ປະຊາສຳພັນໃນສື່ມວນຊົນ, ການຈັດສຳມະນາ, ຈັດເວທີສົນທະນາ, ວິດີໂອສັ້ນໆ, ກະຕູນ, ອິນໂຟກຣາຟິກ ແລະ ການຮ່ວມມືກັບໜ່ວຍງານທີ່ກ່ຽວຂ້ອງຂອງພາກລັດ-ເອກະຊົນ ເພື່ອການປະກອບສ່ວນຊຸກຍູ້, ສົ່ງເສີມ, ສ້າງການປ່ຽນແປງຢ່າງແທ້ຈິງດ້ວຍຄວາມຕື່ນຕົວສະໝັກໃຈ ໃນວຽກການຄວາມປອດໄພ, ສຸຂະພາບແຮງງານ, ສິ່ງແວດລ້ອມ, ຂີ້ເຫຍື້ອ; ດຳເນີນການປ້ອງກັນ ແລະ ປົກປັກຮັກສາສິ່ງແວດລ້ອມ ໂດຍສະໜັບ ສະໜູນການຈັດຕັ້ງປະຕິບັດນະໂຍບາຍ, ລະບຽບການ ຫຼື ມາດຕະການຕ່າງໆ ທີ່ຂັ້ນເທິງວາງອອກເຊັ່ນ: ການຫຼຸດຜ່ອນ ມົນລະພິດ, ການຫຼຸດຜ່ອນ ແລະ ກຳຈັດສິ່ງເສດເຫຼືອ (ຂີ້ເຫຍື້ອ, ນ້ຳເປື້ອນ) ໃຫ້ຖືກວິທີ.

6. ສະໜອງ ຫຼື ສະໜັບສະໜູນ ເຄື່ອງປ້ອງກັນ ແລະ ອຸປະກອນຕ່າງໆ ໃຫ້ແກ່ຜູ້ອອກແຮງງານ, ຜູ້ເກັບຂີ້ເຫຍື້ອ ແລະ ຜູ້ເຮັດວຽກອື່ນໆ ເພື່ອນຳໃຊ້ເຂົ້າໃນການປ້ອງກັນ ແລະ ຮັກສາຕໍ່ກັບຊີວິດ, ສຸຂະພາບ, ຮ່າງກາຍຂອງຜູ້ຕົນເອງ;

7. ເພື່ອປະກອບສ່ວນໃຫ້ປະເທດຊາດ ໃຫ້ມີດ້ານຄວາມປອດໄພ, ສຸຂະພາບແຮງງານ ແລະ ສິ່ງແວດລ້ອມແບບຍືນຍົງ ເປັນຕົ້ນແມ່ນສະມາຄົມ ມີເຈດຈຳນົງທີ່ຊັດເຈນໃນການມີສ່ວນຮ່ວມພັດທະນາປະເທດໃນດ້ານຄວາມປອດໄພ, ສຸຂະພາບແຮງງານ ແລະ ສິ່ງແວດລ້ອມ ໂດຍຕັ້ງເປົ້າໝາຍໃຫ້ເກີດການພັດທະນາແບບຍືນຍົງໃນໄລຍະຍາວໃນດ້ານຄວາມປອດໄພການອອກແຮງງານ, ສຸຂະພາບຂອງຜູ້ອອແຮງງານ, ອະນຸລັກສິ່ງແວດລ້ອມ; ສະເໜີ, ຊຸກຍູ້, ສະໜັບສະໜູນ ໃຫ້ພາກລັດ ພິຈາລະນາປັບປຸງ, ສ້າງນະໂຍບາຍໃນດ້ານຄວາມປອດໄພການອອກແຮງງານ, ສຸຂະພາບຂອງຜູ້ອອແຮງງານ ແລະ ສິ່ງແວດລ້ອມຂອງພາກສ່ວນທີ່ກ່ຽວຂ້ອງລັດ;

8. ປະສານງານກັບພາກລັດທີ່ກ່ຽວຂ້ອງ ໃຫ້ສະເໜີ, ຊຸກຍູ້, ສະໜັບສະໜູນ ໃຫ້ພາກລັດ, ພາກເອກະຊົນ ແລະ ການມີສ່ວນຮ່ວມຂອງປະຊາຊົນໃນທຸກພາກສ່ວນ ໃຫ້ເອົາໃຈໃສ່ກ່ຽວກັບຄວາມປອດໄພ, ສຸຂະພາບຂອງຜູ້ອອອກແຮງງານ, ການປັບປຸງ-ສ້າງສະພາບແວດລ້ອມການອອກແຮງງານ ແລະ ສິ່ງແວດລ້ອມ. ພ້ອມກັນນັ້ນ, ຍົກລະດັບ ຫຼື ໃຫ້ຄວາມສຳຄັນຕໍ່ກັບຄວາມປອດໄພ, ສຸຂະພາບຂອງຜູ້ອອອກແຮງານ, ການປັບປຸງ-ສ້າງສະພາບແວດລ້ອມການອອກແຮງງານ ແລະ ສິ່ງແວດລ້ອມ.

9. ສົ່ງເສີມ, ຊ່ວຍເຫຼືອ, ກະຈ່າຍການສື່ສານການຮຽນຮູ້ທີ່ເໝາະສົມກັບແຮງງານລາວ ກໍຄືປະຊາຊົນລາວໃຫ້ໄດ້ຫຼາຍທີ່ສຸດ ເປັນຕົ້ນແມ່ນສະມາຄົມ ມີຄວາມຕັ້ງໃຈທີ່ຈະສົ່ງເສີມ ແລະ ສະໜັບສະໜູນແຮງງານລາວໃນການເຂົ້າເຖິງການຮຽນຮູ້ ແລະ ການພັດທະນາທັກສະໃນດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ

ໂດຍເປົ້າໝາຍຂອງເຮົາຄືການກະຈາຍຄວາມຮູ້ໄປຍັງແຮງງານ ໃຫ້ໄດ້ຫຼາຍທີ່ສຸດຜ່ານຊ່ອງທາງທີ່ເໝາະສົມກັບບໍລິບົດທາງສັງຄົມ ແລະ ວັດທະນະທຳຂອງຊຸມຊົນລາວ, ສະມາຄົມ ມີຄວາມມຸ້ງໝັ້ນໃນການຈັດເຮັດສື່ການຮຽນຮູ້ທີ່ເຂົ້າເຖິງງ່າຍ, ເຂົ້າໃຈໄດ້ໂດຍບໍ່ຊັບຊ້ອນ ເຊັ່ນ: ວິດີໂອສັ້ນໆ, ກາຕູນ ຫຼື ອິນໂຟກຣາຟິກ ລວມເຖິງການຈັດອົບຮົມແບບປະຕິບັດການ ແລະ ກິດຈະກຳການໃຫ້ຄວາມຮູ້ໃນພື້ນທີ່ທ້ອງຖິ່ນ ຊຶ່ງເຮົາຈະຮ່ວມມືກັບອົງການຈັດຕັ້ງທ້ອງຖິ່ນ ແລະ ໜ່ວຍງານຕ່າງໆ ເພື່ອໃຫ້ໝັ້ນໃຈວ່າແຮງງານລາວຈະໄດ້ຮັບຂໍ້ມູນທີ່ຖືກຕ້ອງ ແລະ ສາມາດນຳໄປໃຊ້ປະຕິບັດໄດ້ຈິງ, ເປົ້າໝາຍຂອງເຮົາຄືການສ້າງແຮງງານທີ່ມີຄວາມຮູ້, ຄວາມເຂົ້າໃຈໃນເລື່ອງຄວາມປອດໄພ, ສຸຂະພາບແຮງງານ ແລະ ສິ່ງແວດລ້ອມ ຢ່າງແທ້ຈິງ;

10. ລະດົມ ຫຼື ຂໍຂວາຍເອົາງົບປະມານ, ທຶນ ແລະ ຊັບສິນຈາກບຸກຄົນ ແລະ ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ເພື່ອມາປະກອບສ່ວນເຂົ້າໃນວຽກງານສາທາລະນະສຸກ; ແຮງງານ ແລະ ສະຫວັດດີການສັງຄົມ ຫຼື ຊ່ວຍເຫຼືອສັງຄົມ; ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

11. ສົ່ງເສີມ ແລະ ປູກຈິດສຳນຶກໃນຊຸມຊົນ, ສັງຄົມ, ປະຊາຊົນ ແລະ ພາກສ່ວນ ໃຫ້ເຫັນເຖິງຄວາມສຳຄັນ, ບົດບາດຂອງການປົກປັກຮັກສາສິ່ງແວດລ້ອມທຸກຮູບແບບ, ເປັນຕົ້ນແມ່ນການຫຼຸດຜ່ອນການສ້າງຂີ້ເຫຍື້ອໃນຊຸມຊົນ ແລະ ແຫລ່ງນໍ້າຕ່າງໆ ອັນເປັນສາເຫດທີ່ສົ່ງຜົນກະທົບໂດຍກົງຕໍ່ການດຳລົງຊີວິດຂອງຊຸມຊົນ;

12. ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃນຊຸມຊົນເພື່ອກຽມພ້ອມໃນການຮັບມືກັບການປ່ຽນແປງດິນຟ້າອາກາດທີ່ເກີດຈາກທຳມະຊາດ ແລະ ການປົກປ້ອງທາງສັງຄົມ ເນື່ອງຈາກການປ່ຽນແປງດິນຟ້າອາກາດ ບໍ່ສາມາດຫ້າມໄດ້ ແຕ່ສາມາດຮັບມືໄດ້ ຫຼື ເຮັດໃຫ້ສົ່ງຜົນເສຍຫາຍໃຫ້ໜ້ອຍທີ່ສຸດກັບຊຸມຊົນ, ໂດຍການກຽມພ້ອມ ແລະ ຕື່ນໂຕຢູ່ຕະຫຼອດເວລາ ພ້ອມທັງສ້າງຄວາມເຂັ້ມແຂງ ໃຫ້ຄວາມຮູ້ແກ່ຊຸມຊົນ ເພື່ອໃຫ້ເຫັນເຖິງຜົນຮ້າຍຂອງສະພາບອາກາດທີ່ກຳລັງມີການປ່ຽນແປງໄປຕະຫຼອດເວລາ, ຫຼຸດຜ່ອນການປ່ອຍພິດອາຍເຮືອນແກ້ວ ໂດຍນຳໃຊ້ຄົນໃນສັງຄົມຮ່ວມມືກັນເພື່ອໃຫ້ເກີດປະໂຫຍດສູງສຸດ;

13. ຊ່ວຍເຫຼືອສັງຄົມເປັນຕົ້ນ, ເຄື່ອງນຸ່ງຫົ່ມ, ອາຫານ, ເຄື່ອງອຸປະໂພກ-ບໍລິໂພກ, ເຄື່ອງໃນຕ່າງໆ ໃຫ້ເດັກນ້ອຍທີ່ດ້ອຍໂອກາດ, ເດັກກຳພ້າ ແລະ ເດັກທີ່ຄອບຄົວທຸກຍາກຂາດເຂີນຢູ່ເຂດຫ່າງໄກສອກຫຼີກ, ເດັກກຳພ້າ, ເດັກກຳພອຍ, ເດັກຂາດທີ່ເພິ່ງພາອາໄສ, ເດັກຂາດຜູ້ດູແລ ຫຼື ອາໄສຢູ່ນຳຄອບຄົວທີ່ທຸກຍາກ, ຜູ້ພິການທາງດ້ານຮ່າງກາຍ ຫຼື ມັນສະໝອງ ບໍ່ສາມາດກຸ້ມຕົນເອງໄດ້ ທີ່ຂາດຜູ້ດູແລ ຫຼື ອາໄສຢູ່ນຳຄອບຄົວທຸກຍາກ, ຜູ້ອາຍຸສູງ ທີ່ປ່ຽວພອຍ ແລະ ທຸກຍາກ ຫຼື ອາໄສຢູ່ນຳຄອບຄົວທຸກຍາກ, ຜູ້ທີ່ຖືກເຄາະຮ້າຍຈາກການຄ້າມະນຸດທີ່ທຸກຍາກ ຫຼື ຕິດແປດພະຍາດ ທີ່ອັນຕະລາຍຕໍ່ສຸຂະພາບ ແລະ ຊີວິດ, ຄົນດ້ອຍໂອກາດໃນສັງຄົມ, ຊ່ວຍເຫຼືອຄົນພິການ, ຜູ້ຖືກຜົນກະທົບຈາກໄພພິບັດທຳມະຊາດ, ໂລກລະບາດຕ່າງໆ;

14. ຊ່ວຍເຫຼືອສັງຄົມເປັນຕົ້ນແມ່ນເຄື່ອງນຸ່ງຫົ່ມ, ອາຫານ, ປຶ້ມແບບຮຽນ, ໂຕະ, ຕັ່ງ, ຕຽງນອນ, ອຸປະກອນການສຶກສາ ໃຫ້ເດັກນ້ອຍທີ່ດ້ອຍໂອກາດ, ເດັກກຳພ້າ ແລະ ເດັກທີ່ຄອບຄົວທຸກຍາກຂາດເຂີນຢູ່ເຂດຫ່າງໄກສອກຫຼີກ, ເດັກກຳພ້າ, ເດັກກຳພອຍ, ເດັກຂາດທີ່ເພິ່ງພາອາໄສ, ເດັກຂາດຜູ້ດູແລ ຫຼື ອາໄສຢູ່ນຳຄອບຄົວທີ່ທຸກຍາກ, ຜູ້ພິການ, ຄອບຄົວທຸກຍາກ, ຜູ້ອາຍຸສູງ ທີ່ປ່ຽວພອຍ ແລະ ທຸກຍາກ, ຄົນດ້ອຍໂອກາດໃນສັງຄົມ, ຊ່ວຍເຫຼືອຄົນພິການ; ຜູ້ທີ່ໄດ້ຮັບກະທົບມາຈາກໂລກລະບາດ ແລະ ໄພທຳມະຊາດເຊັ່ນ: ໄພໜາວ, ໄພແຫ້ງແລ້ງ, ໄພນໍ້າຖ້ວມ, ໄພຂາດອາຫານ ແລະ ອື່ນໆ;

15. ພົວພັນປະສານງານບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນຂ່າວສານ, ຝຶກອົບຮົມ, ສຳມະນາ, ຈັດກອງປະຊຸມ ແລະ ອື່ນໆ ກ່ຽວກັບດ້ານຄວາມປອດໄພການອອກແຮງງານ, ສຸຂະພາບຂອງຜູ້ອອກແຮງງານ ແລະ ສິ່ງແວດລ້ອມ;

16. ຊ່ວຍເຫຼືອສະມາຊິກ ໃນເວລາເຈັບເປັນ, ເສຍຊີວິດ ແລະ ອື່ນໆ.

**ມາດຕາ 5 ຂະແໜງການເຄື່ອນໄຫວ**

ສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ດັ່ງນີ້:

1. ຂະແໜງສຶກສາທິການ ແລະ ກິລາ.
2. ຂະແໜງແຮງງານ ແລະ ສະຫວັດດີສັງຄົມ;
3. ຂະແໜງກະສິກຳ ແລະ ສິ່ງແວດລ້ອມ.

**ມາດຕາ 6 ຂອບເຂດການເຄື່ອນໄຫວ.**

ສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ແມ່ນອົງການຈັດຕັ້ງສັງຄົມທີ່ມີສະມາຊິກ ແລະ ເຄື່ອນໄຫວໃນຂອບເຂດທົ່ວປະເທດ.

**ມາດຕາ 7 ຫຼັກການໃນການເຄື່ອນໄຫວຂອງສະມາຄົມ.**

ສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ເຄື່ອນໄຫວຕາມຫຼັກການດັ່ງນີ້:

1. ຕົນຕົວສະໝັກໃຈປະກອບທຶນ, ຊັບສິນ ເພື່ອສ້າງຕັ້ງສະມາຄົມ;
2. ບໍ່ຫວັງຜົນກຳໄລ;
3. ເຄື່ອນໄຫວເປັນປະຈຳ;
4. ກຸ້ມຕົນເອງທາງດ້ານການເງິນ;
5. ໂປ່ງໃສ, ເປີດເຜີຍ, ມີປະຊາທິປະໄຕ ແລະ ມີຄວາມສະເໝີພາບ;
6. ຮັບຜິດຊອບດ້ວຍຕົນເອງຕໍ່ໜ້າກົດໝາຍທຸກການເຄື່ອນໄຫວຂອງສະມາຄົມ.

## ໝວດທີ II
## ໂຄງປະກອບການຈັດຕັ້ງຂອງສະມາຄົມ

**ມາດຕາ 8 ໂຄງປະກອບກົງຈັກຂອງສະມາຄົມ**

ໂຄງປະກອບກົງຈັກຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ປະກອບມີດັ່ງນີ້:

1. ຫ້ອງການ;
2. ໜ່ວຍງານຈຳນວນໜຶ່ງ.

**ມາດຕາ 9 ໂຄງປະກອບບຸກຄະລາກອນຂອງສະມາຄົມ**

ໂຄງປະກອບບຸກຄະລາກອນຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ປະກອບມີດັ່ງນີ້:

1. ຄະນະບໍລິຫານ (ປະທານ, ຮອງປະທານ, ກຳມະການ);
2. ຄະນະກວດສະມາຄົມ;
3. ຜູ້ອຳນວຍການ;
4. ສະມາຊິກ;
5. ພະນັກງານບໍລິຫານ, ອາສາສະໝັກ ແລະ ພະນັກງານວິຊາການ.

**ມາດຕາ 10 ຄະນະບໍລິຫານ**

ຄະນະບໍລິຫານສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ມີຢ່າງໜ້ອຍ 05 ທ່ານຂຶ້ນໄປ ເຊິ່ງໄດ້ມາຈາກການເລືອກຕັ້ງໂດຍສະມາຊິກສາມັນ ໃນກອງປະຊຸມສ້າງຕັ້ງສະມາຄົມ ຫຼື ກອງປະຊຸມໃຫຍ່ຂອງສະມາຄົມ. ຄະນະບໍລິຫານສະມາຄົມ ມີອາຍຸການດຳລົງຕຳແໜ່ງສະໄໝລະ 05 ປີ ເມື່ອຄະນະບໍລິຫານຢູ່ໃນຕຳແໜ່ງຄົບວາລະແລ້ວ ແຕ່ຄະນະບໍລິຫານຊຸດໃໝ່ ຍັງບໍ່ທັນໄດ້ຮັບຮອງຈາກຄະນະຈັດຕັ້ງສູນ

ກາງພັກ ກໍໃຫ້ຄະນະບໍລິຫານຊຸດເກົ່າຮັກສາການຊົ່ວຄາວໄປກ່ອນ ຈົນກວ່າຈະມີການຮັບຮອງເອົາຄະນະບໍລິຫານຊຸດໃໝ່ຈາກຄະນະຈັດຕັ້ງສູນກາງພັກ.

ຄະນະບໍລິຫານຊຸດເກົ່າ ທີ່ພົ້ນຈາກຕໍາແໜ່ງຕາມວາລະສາມາດສະໝັກເຂົ້າເປັນຄະນະບໍລິຫານ ຊຸດໃໝ່ ໄດ້.

**ມາຕາດ 11 ເງື່ອນໄຂການເປັນຄະນະບໍລິຫານສະມາຄົມ**

ເງື່ອນໄຂການເປັນຄະນະບໍລິຫານສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ດັ່ງນີ້:

1. ສາມາດຊີ້ນໍາ-ນໍາພາ ແລະ ເຕົ້າໂຮມຄວາມສາມັກຄີສະມາຊິກຂອງສະມາຄົມ;
2. ເປັນພົນລະເມືອງລາວ ມີອາຍຸ 18 ປີຂຶ້ນໄປ;
3. ຕື່ນຕົວສະໝັກໃຈ ເຫັນດີເຫັນພ້ອມທີ່ຈະປະຕິບັດຕາມກົດລະບຽບ ແລະ ຂໍ້ກໍານົດຂອງສະມາຄົມ;
4. ມີຄວາມຮູ້ຄວາມສາມາດໃນການບໍລິຫານວຽກງານຂອງສະມາຄົມ;
5. ມີສະຕິສໍາປະຊັນຍະຄົບຖ້ວນ;
6. ເປັນຄົນຊື່ສັດຈິງໃຈຕໍ່ກັບສະມາຄົມ, ມີຄຸນນະທໍາ ແລະ ສິນລະທໍາ;
7. ມີປະຫວັດການເຄື່ອນໄຫວຈະແຈ້ງ, ບໍ່ເຄີຍຖືກສານຕັດສິນລົງໂທດມາກ່ອນ;
8. ເຮັດວຽກດ້ວຍຄວາມສະໝັກໃຈ ແລະ ໂປ່ງໃສ, ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງ ແລະ ກັນກັບເພື່ອນຮ່ວມງານໃນສະມາຄົມ.

**ມາດຕາ 12 ສິດ ແລະ ໜ້າທີ່ຂອງຄະນະບໍລິຫານສະມາຄົມ**

ຄະນະບໍລິຫານສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງແຜນການ, ແຜນງານ, ແຜນງົບປະມານລາຍຮັບ-ລາຍຈ່າຍ ແລະ ຮັບຮອງເອົາແຜນການການເຄື່ອນໄຫວວຽກງານທັງໄລຍະສັ້ນ ແລະ ໄລຍະຍາວຂອງສະມາຄົມ;
2. ຄຸ້ມຄອງທາງດ້ານການເງິນ ແລະ ຊັບສິນຕ່າງໆ ຂອງສະມາຄົມ;
3. ພິຈາລະນາຕົກລົງໃນການອອກຂໍ້ກໍານົດຕ່າງໆ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງສະມາຄົມ;
4. ພິຈາລະນາຕົກລົງແຕ່ງຕັ້ງ ຫຼື ປົດຕໍາແໜ່ງຜູ້ອໍານວຍການ, ພະນັກງານວິຊາການ, ອາສາສະໝັກ, ສະມາຊິກ ແລະ ພະນັກງານບໍລິຫານຂອງສະມາຄົມຕາມຄວາມຕ້ອງການຂອງການເຄື່ອນໄຫວຂອງສະມາຄົມ;
5. ພິຈາລະນາຕົກລົງເຊື້ອເຊີນເອົາຜູ້ຊົງຄຸນວຸດທິ ຫຼື ບຸກຄົນທີ່ໄດ້ສ້າງປະໂຫຍດໃຫ້ແກ່ສະມາຄົມມາເປັນສະມາຊິກກິດຕິມະສັກ ແລະ ສະມາຊິກອື່ນໆຂອງສະມາຄົມ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ.

**ມາດຕາ 13 ການພົ້ນຈາກຕໍາແໜ່ງການເປັນຄະນະບໍລິຫານສະມາຄົມ**

ຄະນະບໍລິຫານສະມາຄົມ ຈະພົ້ນຈາກຕໍາແໜ່ງດ້ວຍເຫດຜົນໃດໜຶ່ງດັ່ງນີ້:

1. ຄົບວາລະການດໍາລົງຕໍາແໜ່ງ;
2. ສະໝັກໃຈລາອອກ;
3. ເສຍຊີວິດ;
4. ບໍ່ຄົບເງື່ອນໄຂຂອງການເປັນຄະນະບໍລິຫານ;
5. ກອງປະຊຸມໃຫຍ່ມີມະຕິໃຫ້ອອກຈາກຕໍາແໜ່ງ ໃນກໍລະນີການເຄື່ອນໄຫວບໍ່ສອດຄ່ອງກົດລະບຽບຂອງສະມາຄົມ ແລະ ເຮັດໃຫ້ເກີດຄວາມເສື່ອມເສຍໃຫ້ແກ່ສະມາຄົມ;

**ມາດຕາ 14 ປະທານ ແລະ ຮອງປະທານສະມາຄົມ**

ປະທານ ແລະ ຮອງປະທານສະມາຄົມ ແມ່ນຄະນະບໍລິຫານ ເຊິ່ງຖືກຄັດເລືອກໃນກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານສະມາຄົມ ແລະ ໄດ້ຮັບການຮັບຮອງຈາກຄະນະຈັດຕັ້ງສູນກາງພັກ

ປະທານສະມາຄົມ ມີພາລະບົດບາດໃນການບໍລິຫານວຽກງານຂອງສະມາຄົມໃຫ້ດຳເນີນໄປຕາມແຜນການ ແລະ ຈຸດປະສົງຂອງສະມາຄົມ ທີ່ກຳນົດໄວ້ ເຊິ່ງມີສິດ ແລະ ໜ້າທີ່ດັ່ງນີ້:

1. ເປັນຫົວໜ້າໃນການບໍລິຫານວຽກງານຂອງສະມາຄົມ, ຊີ້ນຳ-ນຳພາ ແລະ ບໍລິຫານວຽກງານຂອງສະມາຄົມດ້ວຍຄວາມໂປ່ງໃສ, ເປັນໄປຕາມມະຕິກອງປະຊຸມໃຫຍ່, ກອງປະຊຸມປະຈຳປີ, ແຜນການ ແລະ ຈຸດປະສົງຂອງສະມາຄົມທີ່ກຳນົດໄວ້;
2. ດຳເນີນວຽກງານໃຫ້ເປັນໄປຕາມແຜນ ຫຼື ມະຕິຕ່າງໆ ທີ່ກອງປະຊຸມຄະນະບໍລິຫານໄດ້ຮັບຮອງເອົາ;
3. ຮຽກປະຊຸມໃຫຍ່, ປະຊຸມປະຈຳປີ, ປະຊຸມຄະນະບໍລິຫານ ແລະ ເປັນປະທານໃນບັນດາກອງປະຊຸມດັ່ງກ່າວ;
4. ເປັນຕົວແທນໃຫ້ແກ່ສະມາຄົມ ໃນການຕິດຕໍ່ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ;
5. ພົວພັນປະສານງານກັບບັນດາກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອສ້າງແຜນການ, ໂຄງການ ແລະ ກິດຈະກຳຕ່າງໆ ພ້ອມທັງລາຍງານໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງຊາບ ພາຍຫຼັງໄດ້ຈັດຕັ້ງປະຕິບັດສຳເລັດແລ້ວເປັນແຕ່ລະໄລຍະ;
6. ລົງລາຍເຊັນໃນເອກະສານສຳຄັນຕ່າງໆ ເພື່ອຢັ້ງຢືນຄວາມຖືກຕ້ອງ, ເຊັນບົດບັນທຶກກອງປະຊຸມ;
7. ລົງລາຍເຊັນໃສ່ຂໍ້ກຳນົດຕ່າງໆທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງສະມາຄົມ ຕາມການຕົກລົງເຫັນດີຂອງຄະນະບໍລິຫານ;
8. ລົງລາຍເຊັນໃສ່ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງ ແລະ ປົດຕຳແໜ່ງຜູ້ອຳນວຍການ, ຮັບຮອງເອົາພະນັກງານ, ສະມາຊິກ ແລະ ອາສາສະໝັກ ເພື່ອບັນຈຸເຂົ້າໃນໜ່ວຍງານຕ່າງໆ ຕາມຄວາມຕ້ອງການ ແລະ ການຕົກລົງເຫັນດີຂອງຄະນະບໍລິຫານສະມາຄົມ;
9. ລົງລາຍເຊັນໃສ່ໜັງສືເຊີນເອົາຜູ້ຊົງຄຸນວຸດທິ, ຜູ້ອຸປະຖຳ ແລະ ບຸກຄົນທີ່ໄດ້ສ້າງປະໂຫຍດໃຫ້ສະມາຄົມ ມາເປັນສະມາຊິກກິດຕິມະສັກ ແລະ ສະມາຊິກອື່ນໆຕາມການຕົກລົງເຫັນດີຂອງຄະນະບໍລິຫານສະມາຄົມ;
10. ອຳນວຍຄວາມສະດວກ, ຄວບຄຸມການເຄື່ອນໄຫວບັນດາການຈັດຕັ້ງຕ່າງໆ ທີ່ຂຶ້ນກັບສະມາຄົມ;
11. ມອບວຽກໃຫ້ຮອງປະທານສະມາຄົມຢ່າງເປັນລາຍລັກອັກສອນວ່າການແທນໃນເວລາປະທານບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້;
12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດລະບຽບຂອງສະມາຄົມ ແລະ ກົດໝາຍທີ່ກ່ຽວຂ້ອງກຳນົດໄວ້.

**ຮອງປະທານສະມາຄົມ:** ເປັນຜູ້ຊ່ວຍປະທານສະມາຄົມ, ລົງເລິກວຽກງານວິຊາສະເພາະໃດໜຶ່ງຕາມການມອບໝາຍຂອງປະທານສະມາຄົມ ແລະ ເຮັດໜ້າທີ່ແທນປະທານສະມາຄົມ ໃນເວລາທີ່ປະທານບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້.

**ມາດຕາ 15 ຄະນະກວດກາ**

ຄະນະກວດກາ ແມ່ນພົນລະເມືອງລາວ ມີ 03 ທ່ານຂຶ້ນໄປ ເຊິ່ງໄດ້ມາຈາກການເລືອກຕັ້ງໂດຍສະມາຊິກສາມັນ ໃນກອງປະຊຸມສ້າງຕັ້ງສະມາຄົມ ຫຼື ກອງປະຊຸມໃຫຍ່ຂອງສະມາຄົມ.

ຄະນະກວດກາ ມີພາລະບົດບາດໃນການກວດກາຄະນະບໍລິຫານ, ກວດກາການເຄື່ອນໄຫວຂອງສະມາຄົມ ເພື່ອໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງລັດວາງອອກ ແລະ ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ. ຄະນະກວດກາສະມາຄົມ ມີວາລະດຳລົງຕຳແໜ່ງເທົ່າກັບສະໄໝຂອງຄະນະບໍລິຫານສະມາຄົມ ເຊິ່ງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດຳເນີນການກວດກາການຄຸ້ມຄອງບໍລິຫານ, ການໃຊ້ຈ່າຍການເງິນ ແລະ ຊັບສິນຂອງສະມາຄົມເປັນປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ ຢ່າງເປັນປົກກະຕິ; ພ້ອມທັງເຮັດບົດບັນທຶກຜົນການກວດກາ ຫຼື ບັນຫາຕ່າງໆທີ່ພົບເຫັນ ໃນການກວດກາປະຈຳປີ ໂດຍເຊັນຮັບຮູ້ຈາກປະທານສະມາຄົມ ເພື່ອໃຫ້ຄະນະບໍລິຫານສະມາຄົມ ຫຼື ຜູ້ກ່ຽວຂ້ອງ ຫາຊ່ອງທາງປັບປຸງແກ້ໄຂ;

2. ດຳເນີນການກວດກາເປັນປົກກະຕິ ແລະ ກວດກາໃນກໍລະນີ ທີ່ມີປະກົດການລະເມີດກົດລະບຽບ ຫຼື ແບບແຜນວິທີການເຄື່ອນໄຫວຂອງສະມາຄົມ;
3. ກວດກາການຜັນຂະຫຍາຍ ແລະ ການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່;
4. ກວດສອບການປະຕິບັດນະໂຍບາຍຕໍ່ສະມາຊິກສະມາຄົມ;
5. ພິຈາລະນາແກ້ໄຂຄໍາຮ້ອງ ຫຼື ຄໍາສະເໜີຂອງສະມາຊິກຕາມຂອບເຂດສິດຂອງຕົນ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ສະມາຄົມເຫັນວ່າຈໍາເປັນ.

**ມາດຕາ 16 ຜູ້ອໍານວຍການສະມາຄົມ**

ຜູ້ອໍານວຍການສະມາຄົມ ແມ່ນພົນລະເມືອງລາວ ທີ່ໄດ້ຮັບມາຈາກການແຕ່ງຕັ້ງຂອງປະທານສະມາຄົມ ຕາມການຕົກລົງເຫັນດີຂອງຄະນະບໍລິຫານສະມາຄົມ ເຊິ່ງມີສິດ ແລະ ໜ້າທີ່ດັ່ງນີ້:

1. ບໍລິຫານວຽກງານປະຈໍາວັນຂອງສະມາຄົມ ຕາມແຜນການ, ໂຄງການຂອງສະມາຄົມ;
2. ກະກຽມຈັດປະຊຸມຕ່າງໆຂອງສະມາຄົມຕາມການຊີ້ນໍາຂອງປະທານ ແລະ ຄະນະບໍລິຫານສະມາຄົມ ພ້ອມທັງເຂົ້າຮ່ວມ ແລະ ບັນທຶກກອງປະຊຸມຕ່າງໆຂອງສະມາຄົມ;
3. ປະສານງານກັບພາກສ່ວນຕ່າງໆ ຕາມການມອບໝາຍຂອງຄະນະບໍລິຫານ ແລະ ປະທານສະມາຄົມ;
4. ຂຽນບົດສະເໜີໂຄງການທີ່ກ່ຽວຂ້ອງກັບຈຸດປະສົງຂອງສະມາຄົມ ເພື່ອສະເໜີຄະນະບໍລິຫານ ສະມາຄົມ ຮັບຮອງແລ້ວຍື່ນຕໍ່ຜູ້ໃຫ້ທຶນທັງພາຍໃນ ແລະ ຕ່າງປະເທດ;
5. ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃນດ້ານຕ່າງໆ ທີ່ຈໍາເປັນໃຫ້ແກ່ການເຄື່ອນໄຫວວຽກ ງານຂອງສະມາຄົມ, ຄະນະບໍລິຫານ, ປະທານ, ຮອງປະທານ ແລະ ຄະນະກວດກາຂອງສະມາຄົມ;
6. ກະກຽມບົດສະຫຼຸບປະຈໍາເດືອນ, ປະຈໍາງວດ, ປະຈໍາປີ ເພື່ອລາຍງານຕໍ່ຄະນະບໍລິຫານຂອງ ສະມາຄົມ ຫຼື ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ;
7. ເຮັດບົດລາຍງານສະພາບການເຄື່ອນໄຫວຂອງສະມາຄົມ ເພື່ອລາຍງານຕໍ່ປະທານ, ຄະນະບໍລິຫານ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຢ່າງເປັນປົກກະຕິ;
8. ປະຕິບັດການໃຊ້ຈ່າຍໃຫ້ຖືກຕ້ອງຕາມການຕົກລົງຂອງຄະນະບໍລິຫານ, ກົດລະບຽບຂອງສະມາຄົມ ແລະ ຕາມລະບຽບການກ່ຽວຂ້ອງ;
9. ສະຫລຸບລາຍຮັບ-ລາຍຈ່າຍ ໃຫ້ຄະນະບໍລິຫານສະມາຄົມຊາບເປັນແຕ່ລະໄລຍະ;
10. ຄຸ້ມຄອງຊັບສິນສະມາຄົມ, ຕາມກົດລະບຽບ, ຂໍ້ກໍານົດຕ່າງໆ ຂອງສະມາຄົມ;
11. ສະເໜີຄະນະບໍລິຫານສະມາຄົມ, ປະທານສະມາຄົມ ເພື່ອຮັບຮອງຫົວໜ່ວຍການຈັດຕັ້ງ ແລະ ພະນັກງານຕໍາແໜ່ງຕ່າງໆ ທີ່ຂຶ້ນກັບສະມາຄົມ;
12. ສະເໜີຄໍາເຫັນ, ຄໍາສະເໜີແນະຕໍ່ຄະນະບໍລິຫານ ແລະ ປະທານກ່ຽວກັບບັນຫາຕ່າງໆກ່ຽວກັບ ການເຄື່ອນໄຫວວຽກງານຂອງສະມາຄົມ;
13. ປະຕິບັດສິດ ແລະ ໜ້າທີ່ອື່ນໆ.

**ມາດຕາ 17 ພະນັກງານບໍລິຫານ ແລະ ພະນັກງານວິຊາການ**

ພະນັກງານບໍລິຫານ ແລະ ພະນັກງານວິຊາການຂອງສະມາຄົມ ແມ່ນອາຍຸ 18 ປີຂຶ້ນໄປ, ມີຄວາມຮູ້ ຄວາມສາມາດໃນການຈັດຕັ້ງປະຕິບັດວຽກງານຂອງສະມາຄົມ ຕາມທີ່ກໍານົດໃນຈຸດປະສົງ ແລະ ແຜນງານ, ໂຄງການຂອງສະມາຄົມ. ການຮັບພະນັກງານບໍລິຫານ ແລະ ພະນັກງານວິຊາການ ແມ່ນອີງຕາມຄວາມຮຽກ ຮ້ອງຕ້ອງການຕົວຈິງຂອງສະມາຄົມ ໃນແຕ່ລະໄລຍະ.

# ໝວດທີ III
# ສະມາຊິກ

**ມາດຕາ 18 ປະເພດສະມາຊິກຂອງສະມາຄົມ**

ສະມາຊິກຂອງ ສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ປະກອບມີ 3 ປະເພດ ຄື:

1. ສະມາຊິກສາມັນ;
2. ສະມາຊິກສະໜັບສະໜູນ;
3. ສະມາຊິກກິດຕິມະສັກ.

**ມາດຕາ 19 ສະມາຊິກສາມັນ**

ສະມາຊິກສາມັນຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ແມ່ນ ການຈັດຕັ້ງ ຫຼື ພົນລະເມືອງລາວ ຜູ້ທີ່ມີຄວາມເຫັນດີເຫັນພ້ອມນຳກົດລະບຽບຂອງສະມາຄົມ, ຕື່ນຕົວສະມັກໃຈເຂົ້າຮ່ວມສະມາຄົມ ແລະ ມີມາດຕະຖານ, ເງື່ອນໄຂຄົບຖ້ວນຕາມກົດລະບຽບຂອງສະມາຄົມ.

**ມາດຕາ 20 ເງື່ອນໄຂການເປັນສະມາຊິກສາມັນ**

ເງື່ອນໄຂເປັນສະມາຊິກສາມັນຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ມີດັ່ງນີ້:

1. ມີອາຍຸແຕ່ 18 ປີຂຶ້ນໄປ ໂດຍບໍ່ຈຳແນກເພດ, ຊົນຊັ້ນ, ຊົນເຜົ່າ, ສາສະໜາ;
2. ຈົບການສຶກສາລະດັບຊັ້ນສູງຂຶ້ນໄປ ຫຼື ກຳລັງສຶກສາຢູ່;
3. ມີປະສົບການໃນການເຮັດວຽກພັດທະນາ;
4. ມີຄວາມອົດທົນ ແລະ ສາມາດເຮັດວຽກໄດ້ໃນສະພາບທີ່ກົດດັນ;
5. ມີຈິດໃຈໃນການເຮັດວຽກອາສາ ແລະ ຫ້າວຫັນ ໃນການເຮັດວຽກເພື່ອສ້າງປະໂຫຍດໃຫ້ແກ່ສັງຄົມ;
6. ມີຄວາມຮັບຜິດຊອບສູງ;
7. ມີທັກສະໃນການສື່ສານ ໂດຍສະເພາະກັບຊຸມຊົນໄດ້ດີ;
8. ສາມາດສື່ສານພາສາອັງກິດໄດ້;
9. ມີສຸຂະພາບແຂງແຮງດີ ແລະ ເປັນຄົນມີມະນຸດສຳພັນດີ.
10. ມີປະຫວັດການດຳລົງຊີວິດທີ່ດີ, ບໍ່ເຄີຍຖືກສານຕັດສິນລົງໂທດມາກ່ອນ;
11. ປະກອບເອກະສານຖືກຕ້ອງ ແລະ ຄົບຖ້ວນຕາມແບບຟອມທີ່ສະມາຄົມກຳນົດເຊັ່ນ: ຄຳຮ້ອງ, ຊີວະປະຫວັດ, ບັດປະຈຳຕົວ, ສຳມະໂນຄົວ, ໃບຢັ້ງຢືນທີ່ຢູ່, ໃບແຈ້ງໂທດ ແລະ ເອກະສານ ອື່ນໆ ທີ່ຈຳເປັນ;
12. ສະມາຊິກສາມັນ ຈະຕ້ອງເສຍຄ່າລົງທະບຽນຄັ້ງທຳອິດ **30,000** ກີບ ແລະ ຄ່າບຳລຸງສະມາຄົມ ເດືອນລະ **15,000** ກີບ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງສະມາຊິກສາມັນ**

1. ນຳໃຊ້ສະຖານທີ່ ແລະ ອຸປະກອນ ຂອງສະມາຄົມຕາມກົດລະບຽບກຳນົດ;
2. ສະເໜີຄວາມຄິດເຫັນຕໍ່ຄະນະບໍລິຫານສະມາຄົມ ກ່ຽວກັບການເຄື່ອນໄຫວຂອງສະມາຄົມ;
3. ໄດ້ຮັບສະຫວັດດີການຕ່າງໆ ທີ່ມີຢູ່ໃນສະມາຄົມ ຕາມກົດລະບຽບກຳນົດ;
4. ເຂົ້າຮ່ວມກອງປະຊຸມຂອງສະມາຄົມ;

5. ເລືອກຕັ້ງ, ລົງສະໝັກຮັບເລືອກຕັ້ງເຂົ້າເປັນຄະນະບໍລິຫານ, ຄະນະກວດກາ ແລະ ຜູ້ອຳນວຍ ການຂອງສະມາຄົມ;
6. ອອກຄະແນນສຽງ, ລົງມະຕິໃນກອງປະຊຸມໄດ້ ໜຶ່ງຄະແນນສຽງ;
7. ຮ້ອງຂໍຕໍ່ຄະນະກວດກາ ເພື່ອກວດກາເອກະສານຕ່າງໆ, ບັນຊີລາຍຮັບ-ລາຍຈ່າຍ ແລະ ຊັບສິນຂອງສະມາຄົມ;
8. ສະມາຊິກສາມັນຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສາມັນ ສາມາດສະເໜີຈັດກອງປະຊຸມໃຫຍ່ວິສາມັນໄດ້;
9. ປະຕິບັດກົດໝາຍ, ລະບຽບຂອງລັດ ແລະ ກົດລະບຽບຕ່າງໆ ຂອງສະມາຄົມຢ່າງເຄັ່ງຄັດ;
10. ປະພຶດຕົນໃຫ້ສົມກຽດ ກັບການເປັນສະມາຊິກຂອງສະມາຄົມ;
11. ໃຫ້ຄວາມຮ່ວມມື ແລະ ສະໜັບສະໜູນການເຄື່ອນໄຫວວຽກງານຕ່າງໆຂອງສະມາຄົມ ຕາມກົດລະບຽບກຳນົດ;
12. ເຂົ້າຮ່ວມກິດຈະກຳຕ່າງໆ ທີ່ສະມາຄົມຈັດຂຶ້ນ;
13. ມີສິດ ແລະ ໜ້າທີ່ອື່ນ ບົນພື້ນຖານລະບຽບກົດໝາຍ ແລະ ກົດລະບຽບຂອງສະມາຄົມ.

**ມາດຕາ 22 ວິທີຮັບເປັນສະມາຊິກສາມັນ**

ຜູ້ທີ່ມີຈຸດປະສົງ ຢາກເຂົ້າເປັນສະມາຊິກຂອງສະມາຄົມ ຕ້ອງປະກອບເອກະສານ ແລະ ຍື່ນໜັງສືສະໝັກຕໍ່ປະທານສະມາຄົມ. ຫຼັງຈາກໄດ້ຮັບໃບສະໝັກ ຜູ້ອຳນວຍການຈະຄົ້ນຄ້ວາ ແລະ ສະເໜີຕໍ່ກອງປະຊຸມ ຄະນະບໍລິຫານສະມາຄົມ ເພື່ອພິຈາລະນາວ່າຈະຮັບ ຫຼື ບໍ່ຮັບເຂົ້າເປັນສະມາຊິກຂອງສະມາຄົມ. ເມື່ອຄະນະບໍລິຫານພິຈາລະນາຕົກລົງເຫັນດີ ຫຼື ບໍ່ເຫັນດີ ຜູ້ອຳນວຍການເປັນຜູ້ແຈ້ງໃຫ້ຜູ້ສະໝັກຊາບ. ຖ້າຄະນະບໍລິຫານພິຈາລະນາຕົກລົງເຫັນດີອະນຸມັດໃຫ້ຮັບເອົາຜູ້ສະໝັກເຂົ້າເປັນສະມາຊິກ, ຜູ້ສະໝັກຕ້ອງຈ່າຍເງິນຄ່າລົງທະບຽນ ແລະ ຄ່າບຳລຸງສະມາຄົມ ພາຍໃນກຳນົດເຈັດວັນ ນັບແຕ່ມື້ທີ່ໄດ້ຮັບແຈ້ງຈາກຜູ້ອຳນວຍການ. ສະຖານະພາບໃນການເປັນສະມາຊິກຂອງຜູ້ສະໝັກ ໃຫ້ເລີ່ມນັບແຕ່ວັນທີ່ຜູ້ສະໝັກໄດ້ຈ່າຍເງິນຄ່າລົງທະບຽນ ແລະ ຄ່າບຳລຸງສະມາຄົມເປັນຕົ້ນໄປ. ຖ້າຜູ້ສະໝັກບໍ່ຈ່າຍຄ່າລົງທະບຽນ ແລະ ຄ່າບຳລຸງຮັກສາສະມາຄົມ ພາຍໃນກຳນົດ ກໍໃຫ້ຖືວ່າການສະໝັກຄັ້ງນີ້ເປັນໂມຄະ.

**ມາດຕາ 23 ສະມາຊິກສະໜັບສະໜູນ**

ສະມາຊິກສະໜັບສະໜູນຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ແມ່ນການຈັດຕັ້ງ ຫຼື ພົນລະເມືອງລາວ ທີ່ມີຄວາມເຫັນດີເຫັນພ້ອມນຳກົດລະບຽບຂອງສະມາຄົມ, ມີຄວາມຕື່ນຕົວສະມັກໃຈເຂົ້າຮ່ວມ, ປະກອບສ່ວນ, ສົມທົບນຳສະມາຄົມ ແຕ່ບໍ່ທັນມີມາດຕະຖານ, ເງື່ອນໄຂຄົບຖ້ວນເປັນສະມາຊິກສາມັນ ຕາມກົດລະບຽບຂອງສະມາຄົມ ຫຼື ຍັງບໍ່ທັນມີຈຸດປະສົງຢາກເຂົ້າເປັນສະມາຊິກສາມັນເທື່ອ.

ສະມາຊິກສະໜັບສະໜູນ ມີສິດ ແລະ ໜ້າທີ່ ຄືກັນກັບສະມາຊິກສາມັນ ຍົກເວັ້ນສິດເລືອກຕັ້ງ ແລະ ສິດລົງຮັບສະໝັກຮັບເລືອກຕັ້ງເຂົ້າໃນຕຳແໜ່ງຄະນະບໍລິຫານ, ຄະນະກວດກາ, ຜູ້ອຳນວຍການ ແລະ ສິດລົງຄະແນນສຽງຕົກລົງບັນຫາຕ່າງໆ ຂອງສະມາຄົມ. ສະມາຊິກສະໜັບສະໜູນຕ້ອງຈ່າຍຄ່າລົງທະບຽນ **20,000** ກີບ ແລະ ຄ່າບຳລຸງສະມາຄົມເດືອນລະ **10,000** ກີບ.

ເງື່ອນໄຂ ແລະ ວິທີການສະໝັກເຂົ້າເປັນສະມາຊິກສະໜັບສະໜູນຂອງສະມາຄົມ ແມ່ນມີຄືກັບສະມາຊິກສາມັນ.

**ມາດຕາ 24 ສະມາຊິກກິດຕິມະສັກ**

ສະມາຊິກກິດຕິມະສັກຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ແມ່ນຜູ້ຕາງໜ້າການຈັດຕັ້ງ ຫຼື ພົນລະເມືອງລາວ ຊຶ່ງເປັນຜູ້ທີ່ມີບົດບາດ, ເປັນຜູ້ຊົງຄຸນວຸດທິ, ເປັນຜູ້ທີ່ໄດ້ຮັບການເຊື່ອຖືໃນສັງຄົມ, ເຄີຍໄດ້ປະກອບສ່ວນໃຫ້ແກ່ສະມາຄົມ ແລະ ສະມາຄົມໄດ້ເຊີນໃຫ້ເປັນສະມາຊິກກິດຕິມະ

ສັກ. ສະຖານະພາບຂອງສະມາຊິກກິດຕິມະສັກແມ່ນໃຫ້ເລີ່ມນັບແຕ່ວັນທີ່ສະມາຄົມ ໄດ້ຮັບໜັງສືຕອບຮັບຈາກຜູ້ທີ່ຖືກເຊີນເປັນຕົ້ນໄປ.

ສະມາຊິກກິດຕິມະສັກ ມີພາລະບົດບາດໃຫ້ຄໍາປຶກສາ ແລະ ສະເໜີບັນຫາຕ່າງໆ ຕໍ່ຄະນະບໍລິຫານສະມາຄົມ ໃຫ້ຮັບເອົາໄປຄົ້ນຄວ້າພິຈາລະນາ.

ສິດ ແລະ ໜ້າທີ່ອື່ນໆ ແມ່ນມີຄືກັນກັບ ສະມາຊິກສະໜັບສະໜູນ ຍົກເວັ້ນສິດເລືອກຕັ້ງ ແລະ ສິດລົງຮັບສະມັກຮັບເລືອກຕັ້ງເຂົ້າໃນຕໍາແໜ່ງຄະນະບໍລິຫານ, ຄະນະກວດກາ, ຜູ້ອໍານວຍການ ແລະ ສິດລົງຄະແນນສຽງຕົກລົງບັນຫາຕ່າງໆ ຂອງສະມາຄົມ. ສໍາລັບການຈ່າຍເງິນຄ່າທໍານຽມການເປັນສະມາຊິກແມ່ນຈະບໍ່ໄດ້ຈ່າຍ ຫຼື ຂຶ້ນກັບຄວາມສະໝັກໃຈຂອງສະມາຊິກກິດຕິມະສັກ.

**ມາດຕາ 25 ການສິ້ນສຸດການເປັນສະມາຊິກແຕ່ລະປະເພດຂອງສະມາຄົມ**

ສະມາຊິກແຕ່ລະປະເພດຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ຈະສິ້ນສຸດໃນກໍລະນີດັ່ງນີ້:

1. ຖືກຄະນະບໍລິຫານປົດອອກ ຈາກການເປັນສະມາຊິກ;
2. ລະເມີດກົດລະບຽບຂອງສະມາຄົມ ຫຼື ກົດໝາຍ ພາໃຫ້ເກີດຜົນເສຍຫາຍຢ່າງຮ້າຍແຮງ;
3. ລາອອກດ້ວຍຄວາມສະໝັກໃຈ;
4. ບໍ່ເຂົ້າຮ່ວມການເຄື່ອນໄຫວກິດຈະກໍາຂອງສະມາຄົມເປັນເວລາສາມເດືອນຕິດຕໍ່ກັນ;
5. ເສຍຊີວິດ.

**ມາດຕາ 26 ຂໍ້ຫ້າມຂອງສະມາຊິກ**

ຂໍ້ຫ້າມຂອງສະມາຊິກສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ມີດັ່ງນີ້:

1. ຫ້າມເຄື່ອນໄຫວຜິດກົດໝາຍ ແລະ ລະບຽບຂອງລັດວາງອອກ;
2. ຫ້າມມີການແບ່ງແຍກພັກພວກ, ເປັນກຸ່ມກ້ອນ ແລະ ກ່າວຫາໂຈມຕີການຈັດຕັ້ງຂອງສະມາຄົມ ຫຼື ການຈັດຕັ້ງອື່ນ;
3. ຫ້າມມີພຶດຕິກໍາຕ່າງໆ ທີ່ເປັນການລະເມີດກົດລະບຽບຂອງສະມາຄົມ.

## ໝວດທີ IV
## ກອງປະຊຸມຂອງສະມາຄົມ

**ມາດຕາ 27 ກອງປະຊຸມຂອງສະມາຄົມ**

ກອງປະຊຸມຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ປະກອບມີ 3 ປະເພດ ດັ່ງນີ້:

1. ກອງປະຊຸມໃຫຍ່;
2. ກອງປະຊຸມປະຈໍາປີ;
3. ກອງປະຊຸມຄະນະບໍລິຫານ.

**ມາດຕາ 28 ກອງປະຊຸມໃຫຍ່ຂອງສະມາຄົມ**

ກອງປະຊຸມໃຫຍ່ຂອງສະມາຄົມ ແມ່ນອົງການນໍາສູງສຸດຂອງສະມາຄົມ ໄຂຂຶ້ນ ໂດຍການເຂົ້າຮ່ວມຂອງສະມາຊິກຂອງສະມາຄົມ. ສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມ ຈັດກອງປະຊຸມໃຫຍ່ຂອງຕົນ 05 ປີຕໍ່ໜຶ່ງຄັ້ງ, ແຕ່ຖ້າມີຄວາມຈໍາເປັນ ຫຼື ມີວຽກດ່ວນ ກໍ່ສາມາດຈັດກອງປະຊຸມໃຫຍ່ວິສາມັນຂຶ້ນໄດ້.

**28.1 ລະບຽບການຈັດກອງປະຊຸມ**

ກ່ອນໄຂກອງປະຊຸມໃຫຍ່ທຸກຄັ້ງ ສະມາຄົມຈະຂໍອະນຸຍາດຈາກອົງການຈັດຕັ້ງລັດທີ່ກ່ຽວຂ້ອງລ່ວງໜ້າ ຢ່າງໜ້ອຍ 60 ວັນ ພ້ອມທັງລັດຕິດເນື້ອໃນກອງປະຊຸມ ແລະ ລາຍຊື່ຜູ້ທີ່ຈະເຂົ້າຄັດເລືອກເປັນຄະນະບໍລິຫານ ສະມາຄົມ. ຜູ້ອໍານວຍການສະມາຄົມຕ້ອງແຈ້ງໃຫ້ສະມາຊິກຊາບ ເປັນລາຍລັກອັກສອນຢ່າງໜ້ອຍ 30 ວັນ ກ່ອນການໄຂກອງປະຊຸມ.

ກອງປະຊຸມຈະໄຂຂຶ້ນໄດ້ກໍ່ຕໍ່ເມື່ອມີສະມາຊິກສາມັນ ເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນ ສະມາຊິກ ສາມັນທັງໝົດ. ໃນກໍລະນີ ຈໍານວນສະມາຊິກສາມັນຂອງສະມາຄົມ ມີຈໍານວນຫຼວງຫຼາຍ ແມ່ນສາມາດໃຊ້ຮູບ ແບບຕົວແທນສະມາຊິກສາມັນ ເພື່ອເປັນເງື່ອນໄຂໃນການຈັດກອງປະຊຸມ ໂດຍຕົວແທນສະມາຊິກສາມັນ ຕ້ອງເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນຕົວແທນທັງໝົດ. ການກໍານົດຈໍານວນຕົວແທນສະມາຊິກສາມັນ ຕ້ອງກໍານົດເປັນອັດຕາສ່ວນທີ່ຊັດເຈນຄື: ຈໍານວນຕົວແທນທີ່ຕາງໜ້າກຸ່ມ ຫຼື ໜ່ວຍຂອງສະມາຊິກສາມັນ ແມ່ນກໍານົດເອົາຢ່າງໜ້ອຍ 2/3 ຂອງຈໍານວນສະມາຊິກສາມັນໃນກຸ່ມ ຫຼື ໜ່ວຍທັງໝົດ ເພື່ອຕາງໜ້າ ສະມາຊິກສາມັນ ໂດຍການຕົກລົງຂອງຄະນະບໍລິຫານ ເພື່ອຮັບປະກັນຄວາມຊັດເຈນ, ຍຸຕິທໍາ ແລະ ໂປ່ງໃສ. ເມື່ອເຖິງເວລາໄຂກອງປະຊຸມແລ້ວ ແຕ່ຜູ້ເຂົ້າຮ່ວມກອງປະຊຸມບໍ່ຄົບຕາມທີ່ກໍານົດໄວ້ ຄະນະບໍລິຫານສະມາຄົມ ຈະໂຈະກອງປະຊຸມ ແລ້ວຮຽກປະຊຸມອີກຄັ້ງໜຶ່ງພາຍໃນ 30 ວັນ.

ສໍາລັບກອງປະຊຸມຄັ້ງໃໝ່ນີ້ ຖ້າມີສະມາຊິກສາມັນ ຫຼື ຕົວແທນສະມາຊິກສາມັນ ເຂົ້າຮ່ວມເທົ່າໃດກໍ່ ຕາມ ໃຫ້ຖືວ່າຄົບຕາມເງື່ອນໄຂຂອງກອງປະຊຸມ. ໃນກໍລະນີເປັນກອງປະຊຸມໃຫຍ່ວິສາມັນ ທີ່ຈະເກີດຂຶ້ນຈາກ ການຮ້ອງຂໍຂອງສະມາຊິກ; ຫາກສະມາຊິກສາມັນ ຫຼື ຕົວແທນສະມາຊິກສາມັນ ບໍ່ຄົບຕາມເງື່ອນໄຂຂອງກອງ ປະຊຸມ ຖືວ່າກອງປະຊຸມນັ້ນເປັນອັນຍົກເລີກ.

ມະຕິຂອງກອງປະຊຸມໃຫຍ່ ໃຫ້ຖືເອົາຕາມສຽງສ່ວນຫຼາຍເປັນຫຼັກ. ແຕ່ຖ້າຄະແນນສຽງ ເທົ່າກັນແມ່ນ ໃຫ້ປະທານເປັນຜູ້ຕັດສິນ.

ໃນກອງປະຊຸມໃຫຍ່ ຖ້າປະທານ ແລະ ຮອງປະທານສະມາຄົມບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ແມ່ນ ໃຫ້ກໍາມະການຄະນະບໍລິຫານ ເຮັດໜ້າທີ່ແທນ.

ພາຍຫຼັງສິ້ນສຸດກອງປະຊຸມໃຫຍ່ປະທານສະມາຄົມຈະສົ່ງບົດລາຍງານຜົນກອງປະຊຸມໃຫ້ອົງການຈັດຕັ້ງ ຂອງລັດທີ່ກ່ຽວຂ້ອງຮັບຊາບ ພາຍໃນ 30 ວັນ. ກອງປະຊຸມແຕ່ລະຄັ້ງ ຈະຕ້ອງມີການບັນທຶກ ແລະ ສົ່ງລາຍ ງານດັ່ງກ່າວໃຫ້ບັນດາສະມາຊິກທຸກໆຄັ້ງ ຢ່າງເປັນລາຍລັກອັກສອນ.

**28.2 ວາລະກອງປະຊຸມ**

1. ຕາງໜ້າຄະນະບໍລິຫານລາຍງານຜົນສໍາເລັດຂອງວຽກງານຕ່າງໆໃນໄລຍະຜ່ານມາ ແລະ ຜ່ານ ທິດທາງແຜນການໃນຕໍ່ໜ້າ;
2. ລາຍງານສະພາບການເງິນ, ແຈ້ງບັນຊີລາຍຮັບ-ລາຍຈ່າຍ ແລະ ບັນຊີງົບປະມານຂອງປີ ແລະ ຊ່ວງຜ່ານມາໃຫ້ສະມາຊິກຮັບຮູ້;
3. ປັບປຸງ ແລະ ຮັບຮອງກົດລະບຽບຂອງສະມາຄົມ (ຖ້າມີ);
4. ເລືອກຕັ້ງຄະນະບໍລິຫານຊຸດໃຫມ່ ເມື່ອຄົບກໍານົດ;
5. ເລືອກຕັ້ງຄະນະກວດກາ ເມື່ອຄົບກໍານົດ;
6. ຍ້ອງຍໍສະມາຊິກ ແລະ ຄູ່ຮ່ວມງານທີ່ມີຜົນງານດີເດັ່ນ;
7. ແລະ ຫົວຂໍ້ອື່ນໆ (ຖ້າມີ).

**28.3 ຜູ້ເຂົ້າຮ່ວມກອງປະຊຸມ**

1. ສະມາຊິກສະມາຄົມ;

2. ຄະນະບໍລິຫານສະມາຄົມ;
3. ຄະນະກວດກາສະມາຄົມ;
4. ຜູ້ອໍານວຍການສະມາຄົມ;
5. ພະນັກງານສະມາຄົມ;
6. ແຂກຮັບເຊີນຈາກພາກລັດ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ;
7. ແລະ ອື່ນໆ.

**ມາດຕາ 29 ກອງປະຊຸມປະຈໍາປີ**

ກອງປະຊຸມປະຈໍາປີຂອງສະມາຄົມແມ່ນກອງປະຊຸມສະຫຼຸບວຽກງານ, ຜ່ານທິດທາງແຜນການໃນປີຕໍ່ໜ້າ ແລະ ຍ້ອງຍໍບຸກຄົນດີເດັ່ນ ໃນການເຄື່ອນໄຫວວຽກງານຂອງສະມາຄົມ ເຊິ່ງຈະຈັດຂຶ້ນໃນຊ່ວງທ້າຍເດືອນພະຈິກ ຫຼື ຕົ້ນເດືອນທັນວາຂອງທຸກໆປີ. ລະບຽບການແຈ້ງຂ່າວກອງປະຊຸມ, ການເຂົ້າຮ່ວມກອງປະຊຸມປະຈໍາປີແມ່ນປະຕິບັດຄືກັນກັບກອງປະຊຸມໃຫຍ່ຂອງສະມາຄົມ. ກອງປະຊຸມແຕ່ລະຄັ້ງ ຈະຕ້ອງມີການບັນທຶກ ແລະ ສົ່ງລາຍງານດັ່ງກ່າວໃຫ້ບັນດາສະມາຊິກທຸກໆຄັ້ງ ຢ່າງເປັນລາຍລັກອັກສອນ.

**29.1 ວາລະກອງປະຊຸມ**

1. ຕາງໜ້າຄະນະບໍລິຫານ ລາຍງານຜົນສໍາເລັດຂອງວຽກງານໃນໄລຍະ 01 ປີຜ່ານມາ ແລະ ທິດທາງແຜນງການໃນຕໍ່ໜ້າ;
2. ລາຍງານສະພາບການເງິນ, ແຈ້ງບັນຊີລາຍຮັບ-ລາຍຈ່າຍ ແລະ ບັນຊີງົບປະມານຂອງປີ ແລະ ໃນໄລຍະຜ່ານມາໃຫ້ສະມາຊິກຮັບຮູ້;
3. ຍ້ອງຍໍສະມາຊິກ ແລະ ຄູ່ຮ່ວມງານທີ່ມີຜົນງານດີເດັ່ນ (ຖ້າມີ);
4. ແລະ ຫົວຂໍ້ອື່ນໆ (ຖ້າມີ).

**29.2 ຜູ້ເຂົ້າຮ່ວມກອງປະຊຸມ**

1. ສະມາຊິກສະມາຄົມ;
2. ຄະນະບໍລິຫານສະມາຄົມ;
3. ຄະນະກວດກາສະມາຄົມ;
4. ຜູ້ອໍານວຍການສະມາຄົມ;
5. ພະນັກງານສະມາຄົມ;
6. ແຂກຮັບເຊີນຈາກພາກລັດ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ;
7. ແລະ ອື່ນໆ.

**ມາດຕາ 30 ກອງປະຊຸມຄະນະບໍລິຫານ**

ກອງປະຊຸມຄະນະບໍລິຫານສະມາຄົມ ຈະຕ້ອງປະຊຸມກັນຢ່າງໜ້ອຍພາຍໃນ 03 ເດືອນຕໍ່ຄັ້ງ ເພື່ອປຶກສາຫາລືກ່ຽວກັບການບໍລິຫານວຽກງານຂອງສະມາຄົມ ແລະ ວາງແຜນການເຄື່ອນໄຫວຕໍ່ໄປ.

ກອງປະຊຸມຂອງຄະນະບໍລິຫານ ຕ້ອງມີສະມາຊິກຄະນະບໍລິຫານເຂົ້າຢ່າງໜ້ອຍ 2/3 (ສອງສ່ວນສາມ) ຂອງຈໍານວນຄະນະບໍລິຫານທັງໝົດ;

ມະຕິກອງປະຊຸມຂອງຄະນະບໍລິຫານ ໃຫ້ຖືເອົາຕາມສຽງສ່ວນຫຼາຍເປັນຫຼັກ ແຕ່ຖ້າຄະແນນສຽງເທົ່າກັນ ກໍ່ໃຫ້ປະທານເປັນຜູ້ຕັດສິນ;

ຄະນະບໍລິຫານແຕ່ລະທ່ານ ຈະຕ້ອງໄດ້ຮັບເອກະສານກ່ຽວກັບກອງປະຊຸມ ແລະ ແຈ້ງວັນເວລາ ແລະ ສະຖານທີ່ປະຊຸມລ່ວງໜ້າກ່ອນ 01 ອາທິດ;

ໃນກອງປະຊຸມຂອງຄະນະບໍລິຫານ ຖ້າປະທານ ແລະ ຮອງປະທານສະມາຄົມບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ ຫຼື ບໍ່ໄດ້ມອບໝາຍໜ້າທີ່ໃຫ້ກຳມະການຄະນະບໍລິຫານທ່ານໃດໜຶ່ງ ກໍ່ໃຫ້ບັນດາກຳມະການທີ່ເຂົ້າຮ່ວມກອງປະຊຸມນັ້ນເລືອກຕັ້ງກັນເອງ ເພື່ອໃຫ້ກຳມະການຜູ້ໃດຜູ້ໜຶ່ງ ມາເຮັດໜ້າທີ່ເປັນປະທານກອງປະຊຸມຄັ້ງນັ້ນ.

ກອງປະຊຸມແຕ່ລະຄັ້ງ ຈະມີການບັນທຶກເປັນລາຍລັກອັກສອນ.

**30.1 ວາລະກອງປະຊຸມ**

1. ລາຍງານວຽກງານ ໃນໄລຍະ 03 ເດືອນ ຜ່ານມາ ແລະ ວາງແຜນ 03 ເດືອນຕໍ່ໜ້າ;
2. ການຮັບເອົາສະມາຊິກໃໝ່ (ຖ້າມີ);
3. ແລະ ຫົວຂໍ້ອື່ນໆ (ຖ້າມີ).

**30.2 ຜູ້ເຂົ້າຮ່ວມກອງປະຊຸມ:**

1. ຄະນະບໍລິຫານສະມາຄົມ;
2. ຄະນະກວດກາສະມາຄົມ;
3. ຜູ້ອຳນວຍການສະມາຄົມ.

## ໝວດທີ V
## ການເງິນ ແລະ ຊັບສິນຂອງສະມາຄົມ

**ມາດຕາ 31 ແຫຼ່ງລາຍຮັບຂອງສະມາຄົມ**

ແຫຼ່ງລາຍຮັບຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ມີດັ່ງນີ້:

1. ເງິນຄ່າສະໝັກເຂົ້າເປັນສະມາຊິກ ແລະ ເງິນບຳລຸງສະມາຊິກແຕ່ລະເດືອນ;
2. ເງິນບໍລິຈາກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ປະກອບສ່ວນນຳສະມາຄົມ;
3. ການຊ່ວຍເຫຼືອຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບອື່ນໆ ທີ່ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 32 ລາຍຈ່າຍຂອງສະມາຄົມ**

ລາຍຈ່າຍພື້ນຖານຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ມີດັ່ງນີ້:

1. ສະໜັບສະໜູນແຜນງານ, ໂຄງການ ແລະ ກິດຈະກຳຕ່າງໆ ຕາມຈຸດປະສົງຂອງສະມາຄົມ ຫຼື ຕາມຈຸດປະສົງຂອງຜູ້ບໍລິຈາກ ແລະ ເພື່ອສາທາລະນະປະໂຫຍດ;
2. ລາຍຈ່າຍບໍລິຫານ ເຊັ່ນ: ຄ່ານໍ້າ, ຄ່າໄຟຟ້າ, ຄ່າເຊົ່າຫ້ອງການ, ເງິນເດືອນພະນັກງານ, ຄ່າເຄື່ອງໃຊ້ຫ້ອງການທີ່ຈຳເປັນສຳລັບວຽກງານຂອງສະມາຄົມ;
3. ລາຍຈ່າຍອື່ນໆ ທີ່ບໍ່ຂັດກັບຈຸດປະສົງຂອງສະມາຄົມ ແລະ ລະບຽບກົດໝາຍທີ່ໄດ້ກຳນົດ.

**ມາດຕາ 33 ລະບຽບການຄຸ້ມຄອງການເງິນ ແລະ ຊັບສິນຂອງສະມາຄົມ**

ສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ມີລະບຽບການຄຸ້ມຄອງການເງິນ ແລະ ຊັບສິນ ດັ່ງນີ້:

1. ການເງິນ ແລະ ຊັບສິນທັງໝົດແມ່ນຢູ່ໃນຄວາມຮັບຜິດຊອບຂອງຄະນະບໍລິຫານສະມາຄົມ;

2. ບັນຊີ ແລະ ເງິນສົດຂອງສະມາຄົມແມ່ນໃຫ້ນຳໄປຝາກໄວ້ໃນທະນາຄານໃດໜຶ່ງ ທີ່ໄດ້ຮັບການສ້າງຕັ້ງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;

3. ການສັ່ງຈ່າຍເງິນໂດຍແຊັກເງິນຂອງສະມາຄົມຈະຕ້ອງມີຢ່າງໜ້ອຍສອງໃນສາມຂອງລາຍເຊັນຄື: ລາຍເຊັນຄະນະບໍລິຫານຂອງສະມາຄົມສອງທ່ານ ຫຼື ຜູ້ໄດ້ຮັບການມອບສິດຈາກປະທານສະມາຄົມ ລົງລາຍເຊັນຮ່ວມກັບອຳນວຍການສະມາຄົມ ຫຼື ຜູ້ຮັບຜິດຊອບກ່ຽວກັບການເງິນ ຫຼື ນາຍບັນຊີຂອງສະມາຄົມ;

4. ປະທານສະມາຄົມ ມີສິດສັ່ງຈ່າຍເງິນສົດຄັ້ງລະບໍ່ເກີນ **100,000,000 ກີບ** ຖ້າເກີນຈະຕ້ອງໄດ້ຮັບການເຫັນດີອະນຸມັດຈາກຄະນະບໍລິຫານສະມາຄົມ, ແຕ່ຖ້າເປັນແຊັກປະທານສາມາດອະນຸມັດໄດ້ຕາມ ມູນຄ່າຕົວຈິງ ເຊັ່ນ: ຈ່າຍຄ່ານ້ຳມັນລົດ ຫລື ຄ່າໂທລະສັບໃນການຕິດຕໍ່ປະສານງານກ່ຽວກັບວຽກງານຂອງສະມາຄົມ;

5. ນາຍບັນຊີມີສິດຮັກສາເງິນສົດໄວ້ໃນຄັງບໍ່ເກີນ **3,000,0000 ກີບ**. ແຕ່ຖ້າເກີນ ໃຫ້ນຳເອົາເງິນສົດໄປເກັບໄວ້ໃນບັນຊີຂອງສະມາຄົມຢູ່ທະນາຄານທີ່ກຳນົດໄວ້ພາຍໃນ **5** ວັນ;

6. ນາຍບັນຊີຈະຕ້ອງເຮັດບັນຊີລາຍຮັບ-ລາຍຈ່າຍ ຕາມແຜນງົບປະມານໃຫ້ຖືກຕ້ອງ ຕາມຫລັກວິຊາການ, ການຮັບ-ການຈ່າຍທຸກຄັ້ງ ຕ້ອງເປັນລາຍລັກອັກສອນພ້ອມທັງລົງລາຍເຊັນຂອງປະທານສະມາຄົມ ຫຼື ຜູ້ທີ່ໄດ້ຮັບສິດຈາກປະທານຮ່ວມກັບນາຍບັນຊີ ຫຼື ຜູ້ດຳເນີນການແທນ ພ້ອມທັງຈ້ຳກາສະມາຄົມທຸກຄັ້ງ;

7. ຜູ້ກວດສອບບັນຊີມີສິດ ແລະ ໜ້າທີ່ຖາມເອົາເອກະສານທີ່ກ່ຽວຂ້ອງກັບການເງິນ, ຊັບສິນຈາກຄະນະບໍລິຫານຂອງສະມາຄົມເພື່ອສອບຖາມກ່ຽວກັບບັນຊີ ແລະ ຊັບສິນຂອງສະມາຄົມ;

8. ຜູ້ກວດສອບບັນຊີຈະຕ້ອງບໍ່ແມ່ນກຳມະການ ຫຼື ພະນັກງານຂອງສະມາຄົມ, ຕ້ອງແມ່ນຜູ້ກວດສອບບັນຊີທີ່ໄດ້ຮັບອະນຸມັດຈາກອົງການທີ່ມີສິດອຳນາດ ແລະ ເປັນທີ່ຍອມຮັບຂອງສັງຄົມ;

9. ຄະນະບໍລິຫານ, ປະທານ ແລະ ຮອງປະທານສະມາຄົມ ຕ້ອງໃຫ້ຄວາມຮ່ວມມືກັບຜູ້ກວດສອບບັນຊີເມື່ອໄດ້ຮັບການຮ້ອງຂໍ.

**ມາດຕາ 35 ການແກ້ໄຂຊັບສິນຂອງສະມາຄົມ ພາຍຫຼັງການຍຸບເລີກ**

ເມື່ອສະມາຄົມຍຸບເລີກດ້ວຍເຫດຜົນໃດກໍ່ຕາມ, ການເງິນ ແລະ ຊັບສິນຂອງສະມາຄົມທີ່ເຫຼືອ ຫຼັງຈາກໄດ້ຊຳລະໜີ້ສິນເປັນທີ່ຮຽບຮ້ອຍແລ້ວ ຊັບສິນທັງໝົດທີ່ເຫຼືອນັ້ນ ໃຫ້ຄະນະບໍລິຫານສະມາຄົມພິຈາລະນາຊ່ວຍເຫຼືອສັງຄົມ ຫຼື ມອບໃຫ້ສະມາຄົມ, ມູນນິທິອື່ນໆ ຫຼື ມອບໃຫ້ຊຸມຊົນທຸກຍາກ ຕາມເງື່ອນໄຂ ແລະ ສະພາບຕົວຈິງທີ່ເໝາະສົມ ໂດຍອີງຕາມມະຕິຕົກລົງຂອງກອງປະຊຸມໃຫຍ່ສະມາຄົມ. ແຕ່ຖ້າກໍລະນີບໍ່ມີສະມາຄົມ, ມູນນິທິທີ່ເຄື່ອນໄຫວຄ້າຍຄືກັນ ແມ່ນມອບໃຫ້ລັດເປັນຜູ້ຈັດສັນ.

ສຳລັບຊັບສິນທີ່ເປັນຂອງໂຄງການ ພາຍຫຼັງສິ້ນສຸດໂຄງການແລ້ວ ຊັບສິນດັ່ງກ່າວຈະໄດ້ປະຕິບັດຕາມບົດບັນທຶກຄວາມເຂົ້າໃຈກ່ຽວກັບການຈັດຕັ້ງປະຕິບັດໂຄງການຂອງຜູ້ໃຫ້ທຶນ.

## ໝວດທີ VI
## ການປັບປຸງກົດລະບຽບ, ການຍຸບເລີກ ແລະ ການແກ້ໄຂຊັບສິນພາຍຫຼັງການຍຸບເລີກສະມາຄົມ

**ມາດຕາ 36 ການປັບປຸງກົດລະບຽບ.**

ກົດລະບຽບຂອງສະມາຄົມ ສາມາດປັບປຸງແກ້ໄຂ ແລະ ປ່ຽນແປງໄດ້ ໂດຍມະຕິກອງປະຊຸມໃຫຍ່ຂອງສະມາຄົມ ຫຼື ກອງປະຊຸມໃຫຍ່ວິສາມັນຂອງສະມາຄົມ ແລະ ຈະມີຜົນບັງຄັບໃຊ້ ພາຍຫຼັງອົງການຈັດຕັ້ງລັດທີ່ກ່ຽວຂ້ອງເຫັນດີ ແລະ ອົງການທີ່ມີສິດອະນຸມັດສ້າງຕັ້ງຮັບຮອງເອົາຢ່າງເປັນທາງການ.

**ມາດຕາ 37 ການຍຸບເລີກ ສະມາຄົມ.**

ສະມາຄົມສາມາດຍຸບເລີກໄດ້ໃນກໍລະນີ ດັ່ງນີ້:

1. ສະມາຊິກສາມັນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທັງໝົດຮຽກຮ້ອງໃຫ້ຍຸບເລີກ;
2. ກອງປະຊຸມໃຫຍ່ສະມາຄົມ ລົງມະຕິໃຫ້ຍຸບເລີກ;
3. ບັນລຸເປົ້າໝາຍ ແລະ ຈຸດປະສົງຂອງສະມາຄົມ;
4. ບໍ່ເຄື່ອນໄຫວກິດຈະກຳຂອງສະມາຄົມເປັນເວລາ 12 ເດືອນຕິດຕໍ່ກັນ.

## ໝວດທີ VII
## ການຍ້ອງຍໍ ແລະ ການປະຕິບັດວິໄນ

**ມາດຕາ 38 ການຍ້ອງຍໍ**

ຄະນະບໍລິຫານສະມາຄົມ ເປັນຜູ້ພິຈາລະນາຕົກລົງໃນການຍ້ອງຍໍ ດ້ວຍຮູບການຕ່າງໆ ຕາມຄວາມສາມາດຕົວຈິງຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນສ້າງຄຸນປະໂຫຍດ ແລະ ສ້າງຄຸນງາມຄວາມດີ ຫຼື ໃຫ້ການສະໜັບສະໜູນແກ່ສະມາຄົມ.

**ມາດຕາ 39 ການປະຕິບັດວິໄນ**

ຄະນະບໍລິຫານ, ຄະນະກວດກາ, ອຳນວຍການ, ສະມາຊິກ ລວມທັງພະນັກງານຂອງສະມາຄົມ ຕ້ອງມີຄວາມຮັບຜິດຊອບຕໍ່ການກະທຳ ຫຼື ການເຄື່ອນໄຫວຂອງຕົນ ໂດຍສະເພາະການປະຕິບັດຕາມກົດລະບຽບຂອງສະມາຄົມ, ກົດໝາຍ ແລະ ລະບຽບການຂອງລັດວາງອອກ. ໃນກໍລະນີເຄື່ອນໄຫວວຽກງານບໍ່ໄປຕາມກົດລະບຽບຂອງສະມາຄົມ, ຄະນະບໍລິຫານສະມາຄົມ ຈະພິຈາລະນາປະຕິບັດກັບຜູ້ກ່ຽວຕາມກໍລະນີ ເບົາ ຫຼື ໜັກ ດັ່ງນີ້:

1. ຖືກຕັກເຕືອນ;
2. ໃຫ້ຂຽນໃບປະຕິຍານວ່າຈະບໍ່ກະທຳຄວາມຜິດຊ້ຳ;
3. ໃຫ້ອອກຈາກການເປັນສະມາຊິກ, ຄະນະບໍລິຫານ, ຄະນະກວດກາ, ຜູ້ອຳນວຍການ ແລະ ພະນັກງານຂອງສະມາຄົມ.

## ໝວດທີ VIII
## ລະບຽບ ແລະ ການແກ້ໄຂຄຳຮ້ອງທຸກ

**ມາດຕາ 40 ລະບຽບການຮ້ອງທຸກ**

ປະທານ, ຮອງປະທານ, ກຳມະການ, ສະມາຊິກ ແລະ ພະນັກງານຂອງສະມາຄົມ ສາມາດສະເໜີບັນຫາຕ່າງໆ ຕໍ່ຄະນະກວດກາສະມາຄົມ ກ່ຽວກັບສິ່ງທີ່ຕົນເອງອັບປະໂຫຍດ ຫຼື ເຫັນວ່າບໍ່ຖືກຕ້ອງກັບກົດລະບຽບຂອງສະມາຄົມ.

**ມາດຕາ 41 ການແກ້ໄຂຄຳຮ້ອງທຸກ**

ຄະນະກວດກາສະມາຄົມ ຕ້ອງຮັບຟັງທຸກຄຳຮ້ອງທຸກຂອງປະທານ, ຮອງປະທານ, ກຳມະການ, ສະມາຊິກ, ພະນັກງານ ແລະ ອາສາສະໝັກຂອງສະມາຄົມ. ຫຼັງຈາກນັ້ນ, ພິຈາລະນາແກ້ໄຂຕາມສິດ ແລະ ໜ້າທີ່ຂອງຕົນ ຫຼື ສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອແກ້ໄຂຕາມກົດລະບຽບຂອງສະມາຄົມ, ກົດໝາຍ ແລະ ລະບຽບການຂອງລັດທີ່ກ່ຽວຂ້ອງ.

## ໝວດທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 42 ການຈັດຕັ້ງປະຕິບັດ**

ປະທານ, ຮອງປະທານ, ກຳມະການ, ຄະນະກວດກາ, ຜູ້ອຳນວຍການ, ອາສາສະໝັກ ແລະ ພະນັກງານຂອງສະມາຄົມຄວາມປອດໄພສຸຂະພາບແຮງງານ ແລະ ສິ່ງແວດລ້ອມລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດກົດລະບຽບສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 43 ຜົນສັກສິດ**

ກົດລະບຽບສະບັບນີ້ ໄດ້ຮັບຮອງເອົາໃນກອງປະຊຸມສ້າງຕັ້ງສະມາຄົມ ເຊິ່ງຈັດຂຶ້ນໃນວັນທີ 10 ມີນາ 2026 ມີຜົນບັງຄັບໃຊ້ນັບແຕ່ວັນທີ ຄະນະຈັດຕັ້ງສູນກາງພັກ ໄດ້ອອກຂໍ້ຕົກລົງຮັບຮອງເອົາເປັນຕົ້ນໄປ.

**ເຊັນປະທານສະມາຄົມ**